ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

# ກົດໝາຍ
# ວ່າດ້ວຍສັນຊາດລາວ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 :** ສັນຊາດລາວ.

ສັນຊາດລາວ ແມ່ນ ສາຍກ່ຽວພັນທາງດ້ານກົດໝາຍ ແລະ ການເມືອງ ຊຶ່ງຜູກຣັດບຸກຄົນຜູ້ໃດຜູ້ໜຶ່ງ ກັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ເຮັດໃຫ້ບຸກຄົນຜູ້ນັ້ນມີຖານະເປັນພົນລະເມືອງລາວ.

ພົນລະເມືອງລາວ ແມ່ນ :

1. ບຸກຄົນທີ່ມີສັນຊາດລາວ ຫລື ໄດ້ສັນຊາດລາວຢ່າງຖືກຕ້ອງມາກ່ອນແລ້ວ ຈົນເຖິງມື້ທີ່ກົດໝາຍສະບັບນີ້ມີຜົນສັກສິດ;
2. ບຸກຄົນຜູ້ທີ່ມີສັນຊາດລາວ ຫລື ໄດ້ສັນຊາດລາວ ຕາມກົດໝາຍສະບັບນີ້.

**ມາດຕາ 2 :** ການບໍ່ອະນຸຍາດໃຫ້ພົນລະເມືອງລາວມີຫລາຍສັນຊາດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ອະນຸຍາດໃຫ້ພົນລະເມືອງລາວ ມີຫລາຍສັນຊາດຄວບກັນ.

**ມາດຕາ 3 :** ການຮັກສາສັນຊາດລາວໄວ້ ໃນເມື່ອຫາກມີການແຕ່ງດອງ ຫລື ການຢ່າຮ້າງ.

ການແຕ່ງດອງ ຫລື ການຢ່າຮ້າງ ຂອງພົນລະເມືອງລາວ ກັບບຸກຄົນທີ່ມີສັນຊາດອື່ນ ຫລື ກັບບຸກຄົນ ທີ່ບໍ່ມີສັນຊາດນັ້ນ ຈະບໍ່ພາໃຫ້ມີການປ່ຽນແປງສັນຊາດລາວ.

ການໄດ້ ຫລື ການເສັຽສັນຊາດລາວ ຂອງຜົວ ຫລື ເມັຽຜູ້ໃດຜູ້ໜຶ່ງຈະບໍ່ພາໃຫ້ສັນຊາດຂອງອີກຝ່າຍໜຶ່ງ ມີການປ່ຽນແປງ.

**ມາດຕາ 4 :** ການຮັກສາສັນຊາດຂອງພົນລະເມືອງລາວ ທີ່ຢູ່ຕ່າງປະເທດ.

ພົນລະເມືອງລາວທີ່ອາໄສຢູ່ຕ່າງປະເທດ ກໍຍັງຮັກສາສັນຊາດລາວຢູ່ ແລະ ຈະໄດ້ຮັບການປົກປ້ອງ ແລະ ຄຸ້ມຄອງ ຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 5** : ການບໍ່ອະນຸຍາດ ມອບໂອນພົນລະເມືອງລາວໃຫ້ລັດຕ່າງປະເທດ.

ພົນລະເມືອງລາວຈະບໍ່ຖືກມອບໂອນ ໃຫ້ແກ່ລັດອື່ນໄດ້.

**ມາດຕາ 6** : ຄົນບໍ່ມີສັນຊາດ.

ບຸກຄົນທີ່ອາໄສຢູ່ໃນດິນແດນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງບໍ່ແມ່ນພົນລະເມືອງລາວ ແລະ ບໍ່ສາມາດຢັ້ງຢືນວ່າຕົນມີສັນຊາດໃດ ກໍຈະຖືວ່າເປັນຄົນບໍ່ມີສັນຊາດ.

**ມາດຕາ 7** : ສິດໃນການຂໍເອົາສັນຊາດອື່ນ.

ພົນລະເມືອງລາວ ມີສິດຂໍເອົາສັນຊາດອື່ນ ແຕ່ຕ້ອງໄດ້ປະສັນຊາດລາວເສັຽກ່ອນ.

ການປະສັນຊາດລາວ ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ການໄດ້ສັນຊາດລາວ

**ມາດຕາ 8** : ພື້ນຖານຂອງການໄດ້ສັນຊາດລາວ.

ສັນຊາດລາວ ຈະໄດ້ມາຈາກ :

1. ການເກີດ;
2. ການຮັບເຂົ້າສັນຊາດລາວ;
3. ພື້ນຖານອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 9** : ສັນຊາດຂອງເດັກ ຊຶ່ງພໍ່ ແລະ ແມ່ ເປັນພົນລະເມືອງລາວ.

ເດັກ ຊຶ່ງໃນເວລາເກີດນັ້ນ ພໍ່ ແລະ ແມ່ ເປັນພົນລະເມືອງລາວ ກໍຈະຖືວ່າເປັນພົນລະເມືອງລາວ ໂດຍບໍ່ຂຶ້ນກັບວ່າເດັກນັ້ນຈະເກີດຢູ່ໃນ ຫລື ນອກດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 10** : ສັນຊາດ ຂອງເດັກ ຊຶ່ງ ພໍ່ ຫລື ແມ່ ເປັນພົນລະເມືອງລາວ.

ໃນເມື່ອ ພໍ່ ຫລື ແມ່ ຂອງເດັກເປັນພົນລະເມືອງລາວ ໃນເວລາເດັກເກີດ ຈະຖືວ່າເດັກຜູ້ນັ້ນ ເປັນພົນລະເມືອງລາວ ຖ້າຫາກວ່າ :

1. ເດັກຜູ້ນັ້ນ ໄດ້ເກີດຢູ່ໃນດິນແດນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

2. ເດ ເປັນຄົນບໍ່ມີສັນຊາດ ທີ່ມີທີ່ຢູ່ປະຈຳໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໄດ້ເຊື່ອມເຂົ້າສັງຄົມວັດທະນະທຳລາວແລ້ວ ກໍຈະຖືວ່າ ເດັກຜູ້ນັ້ນ ເປັນພົນລະເມືອງລາວ.

**ມາດຕາ 12 :** ສັນຊາດຂອງເດັກທີ່ບໍ່ຮູ້ວ່າຜູ້ໃດເປັນພໍ່ ແມ່.

ເດັກທີ່ໄດ້ພົບເຫັນຢູ່ໃນດິນແດນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ບໍ່ ຮູ້ວ່າຜູ້ໃດເປັນພໍ່ແມ່ນັ້ນ ກໍຈະຖືວ່າ ເປັນພົນລະເມືອງລາວ.

ຖ້າວ່າ ໃນເວລາທີ່ເດັກນັ້ນ ຍັງບໍ່ທັນເຖິງກະສຽນອາຍຸ ຫາກມີຫລັກຖານວ່າ ພໍ່ແມ່ຂອງເດັກເປັນພົນລະເມືອງຕ່າງປະເທດ ແລະ ເດັກມີສັນຊາດຂອງຕ່າງປະເທດແລ້ວ ກໍຈະຖືວ່າເດັກຜູ້ນັ້ນ ເປັນພົນລະເມືອງຕ່າງປະເທດ ນັບແຕ່ມື້ເກີດ.

**ມາດຕາ 13 :** ການຮັບເຂົ້າສັນຊາດລາວ.

ພົນລະເມືອງຕ່າງປະເທດ ຫລື ຄົນບໍ່ມີສັນຊາດ ອາດຈະໄດ້ສັນຊາດລາວ ຕາມຄຳຮ້ອງຂໍຂອງຜູ້ກ່ຽວ ຖ້າຫາກວ່າມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້.

**ມາດຕາ 14 :** ເງື່ອນໄຂຂອງການຂໍເອົາສັນຊາດລາວ.

ບຸກຄົນທີ່ຈະຂໍເອົາສັນຊາດລາວ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງຕໍ່ໄປນີ້ :

1. ມີອາຍຸ ສິບແປດປີ ຂຶ້ນໄປ ໃນເວລາເຮັດຄຳຮ້ອງຂໍເອົາສັນຊາດລາວ;

2. ຮູ້ເວົ້າ, ອ່ານ ແລະ ຂຽນ ພາສາລາວໄດ້;

3. ມີຫລັກຖານວ່າຕົນໄດ້ເຊື່ອມເຂົ້າສັງຄົມວັດທະນະທຳລາວ, ຮູ້ ແລະ ເຄົາລົບຮີດຄອງປະເພນີອັນດີງາມຂອງລາວ;

4. ມີສຸກຂະພາບດີ;

5. ບໍ່ໄດ້ຖືກສານຕັດສິນລົງໂທດ ຕັດອິດສະລະພາບ;

6. ຍອມປະສັນຊາດເດີມ;

7. ມີພູມລຳເນົາຖາວອນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢ່າງຕໍ່ເນື່ອງກັນແຕ່ສິບປີຂຶ້ນໄປ ກ່ອນເວລາເຮັດຄຳຮ້ອງຂໍເອົາສັນຊາດລາວ.

## ໝວດທີ 3
## ການເສັຽສັນຊາດລາວ ແລະ ການໄດ້ສັນຊາດລາວຄືນ

**ມາດຕາ 15 :** ສາເຫດທີ່ພາໃຫ້ເສັຽສັນຊາດລາວ.

ສັນຊາດລາວຈະເສັຽໄປໃນກໍລະນີ :

1. ປະສັນຊາດລາວ;

2. ຖອນສັນຊາດລາວຄືນ;

3. ບົ່ງໄວ້ໃນກົດໝາຍສະບັບນີ້.

**ມາດຕາ 16** : ການປະສັນຊາດລາວ.

ພົນລະເມືອງລາວອາດຈະປະສັນຊາດລາວໄດ້ໂດຍໄດ້ຮັບອະນຸຍາດຈາກຄະນະປະຈໍາສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ການປະສັນຊາດລາວ ຈະບໍ່ອະນຸຍາດ ຖ້າວ່າຜູ້ຮ້ອງຂໍຫາກຍັງບໍ່ທັນໄດ້ປະຕິບັດ ພັນທະຂອງພົນລະເມືອງ ຕໍ່ອົງການຈັດຕັ້ງຂອງລັດ ຫລື ສັງຄົມ.

ຖ້າວ່າ ບຸກຄົນທີ່ຮ້ອງຂໍປະສັນຊາດລາວນັ້ນ ຫາກຕົກເປັນຜູ້ຖືກຫາ, ຈໍາເລີຍ ຫລື ຖືກສານຕັດສິນຊຶ່ງຈະໄດ້ປະຕິບັດຄໍາຕັດສິນດັ່ງກ່າວ ຫລື ຖ້າວ່າ ການປະສັນຊາດລາວນັ້ນ ຫາກຂັດກັບຜົນປະໂຫຍດ ຫລື ຄວາມປອດໄພ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວແລ້ວ ກໍຈະບໍ່ອະນຸຍາດໃຫ້ປະສັນຊາດລາວເຊັ່ນດຽວກັນ.

**ມາດຕາ 17** : ການຖອນສັນຊາດລາວຄືນ.

ສັນຊາດລາວທີ່ໄດ້ໄປແລ້ວນັ້ນ ອາດຈະຖືກຖອນຄືນໄດ້ພາຍໃນກໍານົດ ສິບປີ ນັບແຕ່ມື້ໄດ້ສັນຊາດລາວ ເປັນຕົ້ນໄປ ຖ້າເຫັນວ່າ ບຸກຄົນທີ່ໄດ້ສັນຊາດລາວແລ້ວຫາກ :

1. ໄດ້ໃຫ້ຂໍ້ມູນເທັດ ໃນເວລາຮ້ອງຂໍເອົາສັນຊາດລາວ;
2. ປະພຶດຕົນບໍ່ສົມກຽດສັກສີ ຂອງພົນລະເມືອງລາວ.

ການຖອນສັນຊາດລາວ ຈະບໍ່ພາໃຫ້ສັນຊາດຂອງຜົວ ຫລື ເມັຽ ຫລື ລູກຂອງຜູ້ກ່ຽວມີການປ່ຽນແປງ.

**ມາດຕາ 18** : ການໃຫ້ສັນຊາດລາວຄືນ.

ບຸກຄົນທີ່ໄດ້ເສັຽສັນຊາດລາວໄປແລ້ວ ອາດຈະໄດ້ສັນຊາດລາວຄືນໃໝ່ ຕາມຄໍາຮ້ອງຂໍຂອງຜູ້ກ່ຽວ ໂດຍໄດ້ຮັບອະນຸຍາດຈາກຄະນະປະຈໍາສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຜູ້ຮ້ອງຂໍເອົາສັນຊາດລາວຄືນໃໝ່ນັ້ນ ຕ້ອງນໍາເອົາຫລັກຖານມາຢັ້ງຢືນວ່າ ຕົນເຄີຍໄດ້ມີສັນຊາດລາວມາກ່ອນແລ້ວ.

## ໝວດທີ 4
## ສັນຊາດຂອງເດັກ ໃນເມື່ອມີການປ່ຽນແປງສັນຊາດຂອງພໍ່ແມ່

**ມາດຕາ 19** : ສັນຊາດຂອງເດັກ ໃນເມື່ອມີການປ່ຽນແປງສັນຊາດຂອງພໍ່ແມ່ທັງສອງ.

ໃນເມື່ອພໍ່ ແລະ ແມ່ ໄດ້ສັນຊາດລາວ ຫລື ວ່າໄດ້ປະສັນຊາດລາວແລ້ວ ສັນຊາດຂອງເດັກ ທີ່ມີອາຍຸ ສິບສີ່ປີ ລົງມາກໍຈະປ່ຽນແປງໄປນໍາສັນຊາດຂອງພໍ່ແມ່.

**ມາດຕາ 20** : ສັນຊາດຂອງເດັກ ຊຶ່ງພໍ່ ຫລື ແມ່ໄດ້ສັນຊາດລາວ.

ຖ້າວ່າ ພໍ່ ຫລື ແມ່ ຫາກໄດ້ສັນຊາດລາວແລ້ວ ແຕ່ອີກຜູ້ໜຶ່ງຍັງຖືສັນຊາດອື່ນຢູ່ນັ້ນ ເດັກອາດຈະໄດ້ສັນຊາດລາວ ຕາມຄຳຮ້ອງຂໍຂອງ ພໍ່ ຫລື ແມ່ ຜູ້ທີ່ໄດ້ສັນຊາດລາວ.

ຖ້າວ່າ ພໍ່ ຫລື ແມ່ ຫາກໄດ້ສັນຊາດລາວແລ້ວ ແຕ່ອີກຜູ້ໜຶ່ງເປັນຄົນບໍ່ມີສັນຊາດ ເດັກທີ່ອາໄສຢູ່ໃນດິນແດນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍຈະຖືວ່າເປັນພົນລະເມືອງລາວ.

ຖ້າວ່າ ພໍ່ ຫລື ແມ່ ຫາກໄດ້ສັນຊາດລາວແລ້ວ ແຕ່ອີກຜູ້ໜຶ່ງເປັນຄົນບໍ່ມີສັນຊາດ ເດັກທີ່ອາໄສຢູ່ນອກດິນແດນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອາດຈະໄດ້ສັນຊາດລາວ ຕາມຄຳຮ້ອງຂໍຂອງ ພໍ່ ຫລື ແມ່ ຜູ້ທີ່ໄດ້ສັນຊາດລາວ.

**ມາດຕາ 21** : ສັນຊາດຂອງເດັກຊຶ່ງ ພໍ່ ຫລື ແມ່ ໄດ້ປະສັນຊາດລາວ.

ຖ້າວ່າ ພໍ່ ຫລື ແມ່ ຫາກໄດ້ປະສັນຊາດລາວ ແຕ່ອີກຜູ້ໜຶ່ງຍັງຮັກສາສັນຊາດລາວຢູ່ ເດັກຈະຕ້ອງຮັກສາສັນຊາດລາວໄວ້.

**ມາດຕາ 22** : ສັນຊາດຂອງເດັກຕ່າງປະເທດ ທີ່ຖືກເອົາມາເປັນລູກລ້ຽງ.

ເດັກທີ່ເປັນພົນລະເມືອງຕ່າງປະເທດ ຫລື ເດັກທີ່ບໍ່ມີສັນຊາດ ຊຶ່ງພົນລະເມືອງລາວ ໄດ້ເອົາມາເປັນລູກລ້ຽງນັ້ນ ກໍຈະຖືວ່າເປັນພົນລະເມືອງລາວ.

ເດັກທີ່ເປັນພົນລະເມືອງຕ່າງປະເທດ ຊຶ່ງ ຜົວ ຫລື ເມັຽ ຜູ້ໜຶ່ງເປັນພົນລະເມືອງລາວ ແລະ ອີກຜູ້ໜຶ່ງ ເປັນພົນລະເມືອງຕ່າງປະເທດ ໄດ້ເອົາມາເປັນລູກລ້ຽງນັ້ນ ກໍຈະຖືວ່າເປັນພົນລະເມືອງລາວ ຕາມຄຳເຫັນດີຂອງ ພໍ່ລ້ຽງ ແລະ ແມ່ລ້ຽງ.

**ມາດຕາ 23** : ສັນຊາດຂອງເດັກ ຊຶ່ງເປັນພົນລະເມືອງລາວ ທີ່ຖືກເອົາໄປເປັນລູກລ້ຽງ.

ເດັກທີ່ເປັນພົນລະເມືອງລາວ ໂດຍແມ່ນພົນລະເມືອງຕ່າງປະເທດ ຫລື ຜົວເມັຽ ຊຶ່ງຜູ້ໜຶ່ງ ເປັນພົນລະເມືອງລາວ ແລະ ອີກຜູ້ຫນຶ່ງ ເປັນພົນລະເມືອງຕ່າງປະເທດ ໄດ້ເອົາໄປເປັນລູກລ້ຽງນັ້ນ ກໍຈະຮັກສາສັນຊາດລາວໄວ້. ຄະນະປະຈຳສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະອະນຸຍາດໃຫ້ເດັກຜູ້ນັ້ນປະສັນຊາດລາວ ຕາມຄຳຮ້ອງຂໍຂອງ ພໍ່ລ້ຽງ ແລະ ແມ່ລ້ຽງກໍໄດ້. ໃນກໍລະນີທີ່ເດັກຜູ້ນັ້ນ ຫາກມີອາຍຸເກີນກ່ວາ ສິບສີ່ ປີ ແລະ ຍັງບໍ່ທັນເຖິງກະສຽນອາຍຸ ສິບແປດ ປີ ຕ້ອງໃຫ້ມີຄວາມເຫັນດີເປັນລາຍລັກອັກສອນຂອງເດັກເສັຽກ່ອນ.

ເດັກທີ່ເປັນພົນລະເມືອງລາວ ໂດຍແມ່ນຄົນບໍ່ມີສັນຊາດ ຫລື ຜົວເມັຽ ຊຶ່ງຜູ້ໜຶ່ງ ເປັນພົນລະເມືອງລາວ ແລະ ອີກຜູ້ໜຶ່ງເປັນຄົນບໍ່ມີສັນຊາດ ໄດ້ເອົາໄປເປັນລູກລ້ຽງນັ້ນ ກໍຈະຮັກສາສັນຊາດລາວໄວ້.

**ມາດຕາ 24** : ຄວາມເຫັນດີຂອງເດັກ ໃນການປ່ຽນແປງສັນຊາດ.

ໃນກໍລະນີ ທີ່ມີການປ່ຽນແປງສັນຊາດ ຂອງ ພໍ່ແມ່ນັ້ນ ສັນຊາດຂອງເດັກ ທີ່ມີອາຍຸເກີນກ່ວາ ສິບສີ່ ປີ ແລະ ຍັງບໍ່ທັນເຖິງ ສິບແປດ ປີ ຈະຖືກປ່ຽນແປງໄປນໍາສັນຊາດຂອງພໍ່ແມ່ໄດ້ ກໍຕໍ່ເມື່ອຫາກມີຄວາມເຫັນດີ ເປັນລາຍລັກອັກສອນ ຂອງເດັກເທົ່ານັ້ນ.

## ໝວດທີ 5
## ຄໍາຮ້ອງ ແລະ ການພິຈາລະນາ ບັນຫາສັນຊາດລາວ

**ມາດຕາ 25 :** ອົງການທີ່ມີສິດ ຕົກລົງກ່ຽວກັບສັນຊາດລາວ.

ການໃຫ້ສັນຊາດ, ການຖອນສັນຊາດຄືນ, ການປະສັນຊາດ ແລະ ການໃຫ້ສັນຊາດລາວຄືນນັ້ນ ແມ່ນ ຄະນະປະຈໍາສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຕົກລົງ.

**ມາດຕາ 26 :** ຄໍາຮ້ອງກ່ຽວກັບສັນຊາດລາວ.

ທຸກຄໍາຮ້ອງກ່ຽວກັບສັນຊາດລາວນັ້ນ ໃຫ້ຍື່ນຕໍ່ ກະຊວງຍຸຕິທໍາ ເພື່ອຈະນໍາສະເໜີໃຫ້ ຄະນະປະຈໍາສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພິຈາລະນາ ແລະ ຕົກລົງ.

ສໍາລັບບຸກຄົນ ທີ່ອາໄສຢູ່ຕ່າງປະເທດ ໃຫ້ຍື່ນຄໍາຮ້ອງກ່ຽວກັບສັນຊາດລາວ ຜ່ານສະຖານທູດ ຫລື ກົງສູນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈໍາປະເທດນັ້ນ. ໃນກໍລະນີທີ່ບໍ່ມີສະຖານທູດ ຫລື ກົງສູນລາວ ປະຈໍາປະເທດນັ້ນໃຫ້ຍື່ນຄໍາຮ້ອງດັ່ງກ່າວຕໍ່ ກະຊວງການຕ່າງປະເທດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ການຮ້ອງຂໍກ່ຽວກັບສັນຊາດລາວ ໃຫ້ເສັຽຄ່າທໍານຽມເຂົ້າລັດ ຕາມລະບຽບການສະເພາະ.

**ມາດຕາ 27 :** ລະບຽບການກ່ຽວກັບ ບັນຫາສັນຊາດລາວ

ລະບຽບການກ່ຽວກັບ ບັນຫາສັນຊາດລາວ ແມ່ນ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ກໍານົດ.